# ຖະແຫຼງການແຫ່ງຊາດ ກ່ຽວກັບຜົນກອງປະຊຸມສຸດຍອດ ວ່າດ້ວຍຊັບສິນດ້ານມະນຸດ

# ຫົວຂໍ້ພິເສດ: ການເລັ່ງການຟື້ນຟູການຮຽນຮູ້ ໃນສະພາບການຂອງ ໂຄວິດ-19 ຄັ້ງວັນທີ 25 ພຶດສະພາ 2023 ທີ່ ນະຄອນຫຼວງວຽງຈັນ

**(ພ້ອມດ້ວຍ ບົດກ່າວປິດກອງປະຊຸມໃນພາກເຊົ້າ ຂອງ ທ່ານ ສອນໄຊ ສີພັນດອນ, ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ)**

ຮຽນ: - ບັນດາທ່ານຄະນະປະທານຮ່ວມ ທີ່ນັບຖື,
- ບັນດາທ່ານ ການນໍາຂັ້ນສູງ ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ນັບຖື,
- ບັນດາທ່ານ ແຂກຜູ້ມີກຽດ, ທ່ານຍິງ ແລະ ທ່ານຊາຍ ແລະ ຜູ້ເຂົ້າຮ່ວມກອງປະຊຸມ ທີ່ນັບຖື ແລະ ຮັກແພງທັງຫລາຍ

ມາຮອດນີ້ ກອງປະຊຸມສຸດຍອດ ວ່າດ້ວຍຊັບສິນດ້ານມະນຸດ ທີ່ຈັດຂຶ້ນຄັ້ງທໍາອິດ ຢູ່ ສປປ ລາວ ແມ່ນໃກ້ຈະສໍາເລັດແລ້ວ, ດັ່ງບັນດາທ່ານ ໄດ້ຮັບຟັງການສົນທະນາແລກປ່ຽນບົດຮຽນ ຈາກພາຍໃນ ແລະ ຕ່າງປະເທດ ເຊິ່ງຂ້າພະເຈົ້າຕີລາຄາສູງວ່າ ກອງປະຊຸມສອດຍອດຄັ້ງນີ້ ແມ່ນມີຜົນສໍາເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້ ເຫັນໄດ້ຈາກ ບັນດາຜູ້ເຂົ້າຮ່ວມ ໄດ້ມີການແລກປ່ຽນ ຄໍາເຫັນຢ່າງກົງໄປ ກົງມາ ແລະ ສ້າງສັນ ເຮັດໃຫ້ພວກເຮົາສາມາດຊອກຫາວິທີການແກ້ໄຂ ກ່ຽວກັບການສ້າງ ແລະ ພັດທະນາຊັບສິນດ້ານມະນຸດ ຮ່ວມກັນໃນຕໍ່ໜ້າ.

ບັນດາທ່ານ ທີ່ນັບຖື, ເພື່ອເຮັດໃຫ້ການພັດທະນາຊັບສິນດ້ານມະນຸດ ຢູ່ ສປປ ລາວ ຂອງພວກເຮົາໄດ້ຮັບການສືບຕໍ່ປັບປຸງ ແລະ ພັດທະນາໃນຕໍ່ໜ້າ, ຂ້າພະເຈົ້າຂໍນໍາສະເໜີຮ່າງຖະແຫຼງການແຫ່ງຊາດ ກ່ຽວກັບຜົນກອງປະຊຸມສຸດຍອດ ວ່າດ້ວຍຊັບສິນດ້ານມະນຸດ ພາຍໃຕ້ຫົວຂໍ້: ການເລັ່ງການຟື້ນຟູການຮຽນຮູ້ ໃນສະພາບການຂອງ ໂຄວິດ-19 ຊຶ່ງມີເນື້ອໃນໂດຍຫຍໍ້ດັ່ງນີ້:

## 1. ການຮຽນຮູ້ຂັ້ນພື້ນຖານ

- ພື້ນຖານຂອງຊັບສິນດ້ານມະນຸດ ແມ່ນມີຢູ່ໃນມະນຸດເຮົາແຕ່ຍັງໄວເດັກ. ສັດສ່ວນຂອງເດັກນ້ອຍທີ່ຮຽນຈົບຊັ້ນປະຖົມສຶກສາ ແຕ່ບໍ່ສາມາດອ່ານ ແລະ ເຂົ້າໃຈບົດອ່ານຂອງເຂົາເຈົ້າໄດ້ ແມ່ນສັນຍານທີ່ບົ່ງບອກເຖິງຄຸນນະພາບຂອງການສຶກສາໂດຍລວມພາຍໃນປະເທດ, ດັ່ງນັ້ນ ສິ່ງທີ່ສາມາດຊຸກຍູ້ທ່າແຮງບົ່ມຊ້ອນທີ່ ຈະໄດ້ຈາກກຸ່ມປະຊາກອນໃນໄວອອກແຮງງານ ເພື່ອປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງປະເທດ ກໍ່ແມ່ນ ການຮຽນຮູ້ຂັ້ນ

ພື້ນຖານ ເຊິ່ງເປັນປັດໄຈຕົ້ນຕໍສໍາລັບການຮຽນຮູ້ອື່ນໆ ແລະ ທັກສະທີ່ສູງຂຶ້ນ ທີ່ເດັກນ້ອຍ ແລະ ໄວໜຸ່ມຕ້ອງມີ ໂດຍຜ່ານການສຶກສາ.

- ການຮຽນຮູ້ພື້ນຖານແມ່ນສໍາຄັນ ເພື່ອເຮັດໃຫ້ເດັກນ້ອຍທຸກຄົນບັນລຸຄວາມສາມາດຂອງເຂົາເຈົ້າຢ່າງເຕັມທີ່ ແລະ ມີສ່ວນຮ່ວມໃນສັງຄົມ. ຮັບປະກັນໃຫ້ເດັກນ້ອຍໄດ້ມີການຮຽນຮູ້ພື້ນຖານ ໃຫ້ກາຍເປັນພົນລະເມືອງທີ່ດີຂອງຊາດ ເພື່ອເປັນເຈົ້າການພັດທະນາຕົນເອງ, ມີຄວາມສະເໝີພາບລະຫວ່າງຍິງ-ຊາຍ ແລະ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດໃຫ້ມີຄວາມສົມດຸນ ແລະ ຍືນຍົງ.
- ພວກເຮົາໃຫ້ຄໍາໝັ້ນສັນຍາຈະສືບຕໍ່ປັບປຸງການສຶກສາຂັ້ນພື້ນຖານໃຫ້ມີຄຸນນະພາບສູງຂຶ້ນ ໂດຍສຸມໃສ່ປັບປຸງ ແລະ ພັດທະນາການຮຽນຮູ້ຂັ້ນພື້ນຖານ ເພື່ອເຮັດໃຫ້ສັດສ່ວນເດັກນ້ອຍທີ່ຮຽນຈົບຊັ້ນປະຖົມສຶກສາ ສາມາດອ່ານ ແລະ ເຂົ້າໃຈຂໍ້ຄວາມງ່າຍດາຍ ເພີ່ມຂຶ້ນ.

## 2. ການເຂົ້າເຖິງເດັກນ້ອຍທຸກຄົນ ແລະ ການຮັກສາເຂົາເຈົ້າໃຫ້ສືບຕໍ່ຮຽນຢູ່ໃນໂຮງຮຽນ

ນັບຕັ້ງແຕ່ໄດ້ຮັບຜົນກະທົບຈາກການລະບາດຂອງພະຍາດໂຄວິດ-19 ແລະ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ການເຂົ້າຮຽນຂອງນັກຮຽນຫຼຸດລົງ ແລະ ການປະລະການຮຽນໃນທຸກລະດັບ ແມ່ນເພີ່ມຂຶ້ນ. ເພື່ອຮັບປະກັນການຟື້ນຟູ ແລະ ເລັ່ງຟື້ນຟູການຮຽນຮູ້, ພວກເຮົາຈະຕ້ອງໄດ້ຮີບຮ້ອນສຸມໃສ່ສິ່ງເສີມໃຫ້ເດັກນ້ອຍທຸກຄົນໄດ້ກັບເຂົ້າມາຮຽນຄືນ ແລະ ໃຫ້ເຂົາເຈົ້າສືບຕໍ່ຮຽນຈົນຈົບ, ຮັບປະກັນໃຫ້ນັກຮຽນໃຫ້ໄດ້ຮຽນບໍາລຸງ ແລະ ຮຽນຄືນໃຫ້ຫຼາຍຂຶ້ນ ແລະ ດໍາເນີນການສິດສອນໃຫ້ເດັກນ້ອຍຕາມລະດັບການຮຽນຮູ້ຂອງເຂົາເຈົ້າໃນປະຈຸບັນ; ສະໜັບສະໜູນ ແລະ ຊ່ວຍເຫຼືອຄູອາຈານເພື່ອໃຫ້ຄູມີເຄື່ອງມືໃຊ້ສໍາລັບການສິດສອນ ແລະ ສະໜັບສະໜູນຊຸກຍູ້ຊ່ວຍເຫຼືອດ້ານສຸຂະພາບ, ໂພຊະນາການ ແລະ ຈິດຕະສັງຄົມ, ຊີວິດການເປັນຢູ່ທີ່ດີຂອງຄູ ແລະ ເດັກທຸກຄົນ.

## 3. ການສະໜອງງົບປະມານໃຫ້ແກ່ຂະແໜງການສຶກສາຢ່າງເໝາະສົມ

ລັດຖະບານຮັບຮູ້ວ່າການສະໜອງງົບປະມານ ໃຫ້ແກ່ຂະແໜງການສຶກສາຢ່າງເໝາະສົມ, ມີປະສິດທິພາບ ແລະ ມີຄວາມເທົ່າທຽມ ແມ່ນມີຄວາມສໍາຄັນຕໍ່ການເລັ່ງການຟື້ນຟູການຮຽນຮູ້ພາຍຫລັງສະພາບການລະບາດຂອງພະຍາດໂຄວິດ-19, ຄຽງຄູ່ກັບການຮັບປະກັນສິດທິຂອງເດັກທຸກຄົນໃນການສຶກສາທີ່ມີຄຸນນະພາບ ແລະ ມີຄວາມເທົ່າທຽມ ເພື່ອເສີມຂະຫຍາຍຊັບສິນດ້ານມະນຸດຂອງ ສປປ ລາວ ແລະ ບັນລຸໄດ້ວິໄສທັດຂອງປະເທດໃນການກ້າວໄປສູ່ການພັດທະນາເສດຖະກິດທີ່ທັນສະໄໝ ແລະ ເສດຖະກິດທີ່ມີການຂະຫຍາຍຕົວສູງຂຶ້ນ. ພວກເຮົາທຸກພາກສ່ວນ ທັງພາກລັດ, ຄູ່ຮ່ວມພັດທະນາ, ເອກະຊົນ ແລະ ທຸກພາກສ່ວນໃນສັງຄົມ ລວມທັງພໍ່ແມ່ຜູ້ປົກຄອງ ຈະຕ້ອງໄດ້ເຮັດ

ວຽກຮ່ວມກັນ ເພື່ອປະກອບສ່ວນທາງດ້ານວິຊາການ ແລະ ທຶນຮອນ, ນຳໃຊ້ເຕັກໂນໂລຊີ ແລະ ຫັນປ່ຽນການສຶກສາ ໃຫ້ສອດຄ່ອງກັບສະພາບໃນປັດຈຸບັນ ແລະ ສາມາດຮັບມືໄດ້ກັບການປ່ຽນແປງ ທີ່ຈະເກີດຂຶ້ນໃນອະນາຄົດ ເພື່ອພັດທະນາຊັບສິນດ້ານມະນຸດ ໃຫ້ມີຄຸນນະພາບສູງຂຶ້ນ. ລັດຖະບານ ຢືນຢັນວ່າ ຈະພະຍາຍາມເພີ່ມສ່ວນແບ່ງງົບປະມານແຫ່ງຊາດໃຫ້ແກ່ຂະແໜງການສຶກສາ ໃຫ້ ສອດຄ່ອງກັບຄາດໝາຍທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສຶກສາເທື່ອລະກ້າວ, ລວມທັງສ່ວນ ແບ່ງງົບປະມານບໍລິຫານທີ່ບໍ່ແມ່ນເງິນເດືອນ.

ບັນດາທ່ານ ທີ່ນັບຖື!

ເຖິງວ່າກອງປະຊຸມສຸດຍອດ ວ່າດ້ວຍ ຊັບສິນດ້ານມະນຸດ ໃນຄັ້ງນີ້ ໄດ້ສຳເລັດຢ່າງຈົບງາມໃນ ມື້ນີ້ ແຕ່ພາລະກິດໃນການສ້າງຊັບສິນດ້ານມະນຸດເຮົາຍັງສືບຕໍ່ເປັນພາລະກິດຂອງຊາດ, ດັ່ງນັ້ນ ຮຽກຮ້ອງໃຫ້ທຸກພາກສ່ວນຈົ່ງສືບຕໍ່ຮ່ວມມືກັນໃນການພັດທະນາຄົນ ແລະ ພັດທະນາປະເທດຊາດ ໃຫ້ບັນລຸໄດ້ຕາມເປົ້າໝາຍທີ່ວາງໄວ້.

ອີກເທື່ອໜຶ່ງ ຂໍຂອບໃຈ ມາຍັງບັນດາທ່ານຄະນະປະທານຮ່ວມ, ບັນດາທ່ານການນຳຂັ້ນສູງ ຈາກສູນກາງ ແລະ ທ້ອງຖິ່ນ, ບັນດາທ່ານ ແຂກຜູ້ມີກຽດ ແລະ ຜູ້ເຂົ້າຮ່ວມກອງປະຊຸມໃນມື້ນີ້. ພິເສດ ຂໍສະແດງຄວາມຂອບໃຈມາຍັງ ທະນາຄານໂລກ ແລະ ອົງການຢູນິເຊັບ ທີ່ໄດ້ໃຫ້ການສະໜັບສະໜູນ ການຈັດກອງປະຊຸມສຸດຍອດຊັບສິນດ້ານມະນຸດໃນຄັ້ງນີ້. ຂໍອວຍພອນໃຫ້ທຸກທ່ານ ຈົ່ງມີສຸຂະພາບ ແຂງແຮງ ແລະ ມີຜົນສຳເລັດໃນໜ້າທີ່ວຽກງານຂອງບັນດາທ່ານ.

ຂໍກ່າວປິດກອງປະຊຸມ ໃນພາກເຊົ້າ ຢ່າງເປັນທາງການ ນັບແຕ່ເວລານີ້ ເປັນຕົ້ນໄປ.